ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 21 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 2 9 MAY 2015

ສຳນັກງານ ຄຄຊ
ເລກທີ...566
ວັນທີ 1/6/2015
ໂທລະສັບ 021 217770

## ລາຍງານການເຄື່ອນໄຫວປະຈຳອາທິດ
## ...ທີ 18/05/2015 ຫາ 22/05/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ,

### II. ວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 12/05/2015 | ອາທິດນີ້ 19/05/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ (–) |
|---|---|---|---|
| ເອີໂຣ/ ໂດລາ | 1,1196 | 1,1267 | -0,63% |
| ໂດລາ/ເຢນ | 120,07 | 119,97 | 0,08% |
| ໂດລາ/ບາດ | 33,78 | 33,38 | 1,20% |
| ໂດລາ/ເປໂຊ | 44,79 | 44,51 | 0,64% |
| ໂດລາ/ຣູເປັຍ | 13.190,22 | 13.154 | 0,28% |
| ໂດລາ/ໂດລາສິງກະໂປ | 1,3373 | 1,3288 | 0,64% |
| ໂດລາ/ຢວນ | 6,2086 | 6,2052 | 0,06% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 1,03% ຈາກ 59,41 ໂດລາ/ບາເຣວ ມາເປັນ 60,02 ໂດລາ/ບາເຣວ ແລະ ລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 3,11% ຈາກ 1.184,44 ໂດລາ/ອອນ ມາເປັນ 1.221,24 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,22% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,17% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດ ອ່ອນຄ່າລົງ 0,23% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,47% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,04% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,30% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 1,09% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 2,36% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 12/04/2015 | | | ອາທິດນີ້ 19/05/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະນາຄານ[1] | | | | | | | | | |
| ໂດລາ | 8.079,95 | 8.109,43 | 8.099,40 | 8.064,89 | 8.094,37 | 8.081,39 | 0,19% | 0,19% | 0,22% |
| ບາດ | 243,76 | 244,93 | 244,52 | 244,44 | 245,27 | 245,09 | -0,28% | -0,13% | -0,23% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.086,92 | 8.113,93 | 8.100,43 | 8.075,55 | 8.098,27 | 8.086,91 | 0,14% | 0,19% | 0,17% |
| ບາດ | 246,30 | 247,63 | 246,96 | 245,08 | 246,53 | 245,80 | 0,50% | 0,45% | 0,47% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,09% | 0,06% | 0,01% | 0,13% | 0,05% | 0,07% | | | |
| ບາດ | 1,04% | 1,10% | 1,00% | 0,26% | 0,52% | 0,29% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 2,37% ທຽບໃສ່ວັນທີ 15/05/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 35,62%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,05% ເມື່ອທຽບໃສ່ວັນທີ 15/05/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 23,32%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 18/05/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 18,36 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 59,36 ລ້ານໂດລາ ແລະ ຂາຍໂດລາໄດ້ 41,00 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 1.533,47 ລ້ານບາດ (ໃນນີ້ ຊື້ບາດໄດ້ 303,52 ລ້ານບາດ ແລະ ຂາຍບາດໄດ້ 1.836,98 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 3,01% ແຕ່ເພີ່ມຂຶ້ນ 10,18% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 17,69 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 514,22 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 38,01 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 651,95 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 44,86 ລ້ານໂດລາ ແລະ ຊື້ບາດໄດ້ສຸດທິ ຈຳນວນ 1.530,69 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 12/05/2015 | | ອາທິດທີ 18/05/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 16,81 | 189,35 | 10,74 | 102,86 | -36,09% | -45,68% |
| - ທ/ຄທຸລະກິດອື່ນໆ | 33,24 | 205,47 | 48,62 | 200,65 | 46,25% | -2,34% |
| ລວມຊື້: | **50,05** | **394,82** | **59,36** | **303,52** | **18,60%** | **-23,13%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 20,76 | 430,07 | 19,31 | 293,77 | -7,01% | -31,69% |
| - ທ/ຄທຸລະກິດອື່ນໆ | 32,66 | 1.117,89 | 21,69 | 1.543,21 | -33,59% | 38,05% |
| ລວມຂາຍ: | **53,43** | **1.547,97** | **41,00** | **1.836,98** | **-23,26%** | **18,67%** |
| ຊື້-ຂາຍສຸດທິ ທທກ | -3,38 | -1.153,15 | 18,36 | -1.533,47 | -643,60% | 32,98% |
| ຜິດດ່ຽງ ຊື້-ຂາຍ | -6,75 | -292,07 | 30,93 | -505,24 | 376,64% | -213,43% |
| ມູນຄ່າການຊື້-ຂາຍ | 103,47 | 1.942,78 | 100,36 | 2.140,50 | -3,01% | 10,18% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 37,05 | 0,00 | 38,05 | | |
| - ທຫລ ຂາຍໃຫ້ ທທກ | 13,62 | 1.056,00 | 38,01 | 690,00 | | |
| ຊື້-ຂາຍສຸດທິ ທຫລ | **-13,62** | **-1.018,95** | **-38,01** | **-651,95** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **11,21** | **296,72** | **17,69** | **514,22** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 35,75 | 1.208,55 | 0,09 | 1.530,69 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 35,08 | 18,09 | 44,95 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **0,67** | **1.190,46** | **-44,86** | **1.530,69** | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ ປະຈຳເດືອນ 05/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 0,92% ຫຼຸດລົງ 0,03% ຈາກ 0,95% ໃນເດືອນ 04/2015.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 110,4 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 8% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 999 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 17,80% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 750,68 ຕື້ກີບ ເພີ່ມຂຶ້ນ 37,38% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) (15-21/05/2015) ມີຈໍານວນ 1.637 ຄັ້ງ ໂດຍມີມູນຄ່າ 635,23 ຕື້ກີບ ຫຼຸດລົງ 29,42% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 419 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 1.417,14 ຈຸດ ຫຼຸດລົງ 2,43% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 527.261 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,27 ຕື້ກີບ ຫຼຸດລົງ 10,48% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 69,55% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.086 ກີບ/ຮຸ້ນ ຫຼຸດລົງ 263 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 240.957 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,46 ຕື້ກີບ ເພີ່ມຂຶ້ນ 8,45% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 71,50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,67%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.308 ກີບ/ຮຸ້ນ ຫຼຸດລົງ 132 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 205,986 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,50 ຕື້ກີບ ຫຼຸດລົງ 30,80% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 58,72% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,30%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.300 ກີບ/ຮຸ້ນ, ໂດຍໃນອາທິດນີ້ແມ່ນບໍ່ມີການຈັບຄູ່ຊື້-ຂາຍຂອງຮຸ້ນດັ່ງກ່າວ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.809 ກີບ/ຮຸ້ນ ເພີ່ມຂຶ້ນ 44 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 80.318 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 305,91 ລ້ານກີບ ເພີ່ມຂຶ້ນ 129,84% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 24,67% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,72%[5].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສໍາເລັດການຈັດສໍາມະນາວຽກງານການພັດທະນາຕົວຊີ້ບອກຄວາມໝັ້ນຄົງທາງດ້ານການເງິນ ກົມຄຸ້ມຄອງທະນາຄານທຸລະກິດ;
- ສໍາເລັດການຮັບຮອງ ຂໍ້ຕົກລົງວ່າດ້ວຍການກໍານົດຜູ້ຄຸ້ມຄອງວຽກ AML/CFT ສໍາລັບບໍລິສັດຫຼັກຊັບ;
- ສໍາເລັດການຈັດກອງປະຊຸມກວດກາທະນາຄານ ປະຈໍາປີ 2014 ທີ່ສະຖາບັນການທະນາຄານ.

**III. ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈໍານວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2, ❷ ຄົ້ນຄວ້າຮ່າງລະບຽບກ່ຽວກັບການຢຶດ, ອາຍັດທຶນຂອງຜູ້ກໍ່ການ

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

ຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ກະກຽມເຂົ້າຮ່ວມກອງປະຊຸມ ແລະ ສໍາມະນາ: ❶ ກອງປະຊຸມວຽກງານຊໍາລະສະສາງຂອງສູນ SEACEN ຄັ້ງທີ່ 14 ທີ່ປະເທດ ອິນເດຍ ແລະ ❷ ສໍາມະນາ ໃນຫົວຂໍ້: “Preparatory Workshop on Financial Programing and Policies (FPP)” ທີ່ໂຮງແຮມຮັດສະເໜີ ພຣາຊາ;
- ກະກຽມການຄັດເລືອກຜົນງານ 10 ປີ ຂອງກົມກອງ ແລະ ບຸກຄົນ (2005-2015).

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພາສີ ພິມມະກອນ